**ການບ້ານບົດທີ 11 ພາກຕົ້ນ**

# ການປົດປ່ອຍຕົວພວກທາດ

ຄລຕ 4:21-31

**1** ມື້ນີ້ເຮົາຈະເລີ້ມສຶກສາສ່ວນການຊຶ່ງປະກອບດ້ວຍພະທຳໃນສອງບົດໃດ? ____________

______________________________________________________________

**2** ໃນ ຄລຕ ບົດ 3 ແລະ 4 ນີ້ ໂປໂລສອນເລື່ອງຄວາມຈິງ 4 ປະການເພື່ອຄົນທີ່ໄວ້ວາງໃຈໃນພະເຢຊູຄື:

- *ພະເຈົ້າຖືວ່າຄວາມເຊື່ອເປັນຄວາມຊອບທຳ*
- *ພະຄຣິດຊົງໄຖ່ເຮົາໃຫ້ພົ້ນຈາກຄວາມປ້ອຍດ່າ*
- *ເຮົາຮັບພະສັນຍາເປັນມໍລະດົກ*
- *ເຮົາຮັບການປົດປ່ອຍຈາກການເປັນທາດ*

ກ. ຮູບຕໍ່ໄປນີ້ ສະແດງເຖິງຄວາມຈິງປະການໃດ? ____________________________




ຂ. ຮູບນີ້ສະແດງເຖິງຄວາມຈິງປະການໃດ? ________________________________



**2** ຄ. ຮູບນີ້ເດ?___________________________________________




ງ. ສຸດທ້າຍ ຮູບນີ້ສະແດງຫຍັງ? ___________________________________




*ໃນບົດທີ 5 ເຮົາຮຽນມາແລ້ວເລື່ອງ 3 ປະການທຳອິດຄື:*

- *ພະເຈົ້າຖືວ່າຄວາມເຊື່ອເປັນຄວາມຊອບທຳ* *ຄລຕ 3:6-9*
- *ພະຄຼິດຊົງໄຖ່ເຮົາໃຫ້ພົ້ນຈາກຄວາມປ້ອຍດ່າ* *ຄລຕ 3:10-14*
- *ເຮົາຮັບພະສັນຍາເປັນມໍລະດົກ* *ຄລຕ 3:15-4:7*

*ໃນບົດນີ້ເຮົາຈະຮຽນເລື່ອງປະການທີ 4 ຄື:*

- *ເຮົາຮັບການປົດປ່ອຍຈາກການເປັນທາດ* *ຄລຕ 4:21-31*

**3** ໃນ ຄລຕ 4:21-31 ໂປໂລສະແດງວ່າ ພະບັນຍັດເຮັດໃຫ້ເຮົາເປັນຂ້ອຍຂ້າ ແຕ່ເຮົາຈະໄດ້ຮັບການປົດປ່ອຍ. ຄົນທີ່ມາສອນບໍ່ຈິງຈະຍົກພະຄຳພີເດີມມາໃຊ້ຢ່າງບໍ່ຖືກເພື່ອໃຫ້ຄຶດສະຕຽນຊາວຄາ ລາເຕຍຢູ່ໃຕ້ການບັງຄັບຂອງພະບັນຍັດອີກ. ໂປໂລຍົກພະຄຳພີເດີມມາແກ້ບັນຫານັ້ນ.




ອັບລາຮາມມີສອງເມຍ ເມຍຫຼວງກັບເມຍນ້ອຍຊຶ່ງເປັນຂ້ອຍຂ້າ.

ກ. ເມຍຫຼວງຊື່ຫຍັງ? ______________________________

ຂ. ຂ້ອຍຂ້າຊື່ຫຍັງ? ____________________ (ໃນພະຄຳພີເດີມຊື່ວ່າ "ຮາກາ")

**4** ເມຍຫຼວງຄືຊາລາບໍ່ມີລູກເພາະເປັນໝັນ. ດັ່ງນັ້ນຊາລາຂໍໃຫ້ອັບລາຮາມເອົາຮາຄານເປັນເມຍນ້ອຍ ຈຶ່ງຈະມີລູກໄດ້ ແຕ່ຕໍ່ໄປຊາລາກິນແໜງ.




ກ. ເມຍໃດມີລູກ? ______________________________

ຂ. ເປັນຫຍັງຊາລາບໍ່ມີລູກ? ______________________________



( ປຖກ 15:4~5 )

**5** ອັບລາຮາມພົບການນິມິດຈາກພະເຈົ້າໃນເວລາກາງຄືນ

ກ. ອັບລາຮາມກະທຳຕອບຢ່າງໃດ? (ເລືອກ)

______ ເຊື່ອ ______ ບໍ່ເຊື່ອ

ຂ. ໃນ ຄລຕ 3:6 ພະເຈົ້າຊົງຖືວ່າຫຍັງເປັນຄວາມຊອບທຳແກ່ອັບລາຮາມ?

______________________



( ປຖກ 17:7 )

**6** ກ. ພະເຈົ້າຕັ້ງຫຍັງໄວ້ເພື່ອເຊື້ອສາຍຂອງອັບລາຮາມຄືຄົນທີ່ເຊື່ອ? __________

ຂ. ການນັ້ນສະເພາະເພື່ອຊາດຢິວ ຫຼືເພື່ອທຸກຄົນທີ່ເຊື່ອ? ________________

**7** ພະສັນຍານັ້ນມີລັກສະນະຢ່າງໃດ? (ເລືອກ)

ກ. ສະເພາະເພື່ອຄົນຢິວຢ່າງດຽວ

ຂ. ເພື່ອທັງຊາດຢິວແລະຄົນຕ່າງຊາດ

ຄ. ເພື່ອຄົນທີ່ເຊື່ອໃນພະອົງ

ງ. ເພື່ອແຕ່ຄົນທີ່ຖືພະບັນຍັດ

**8** ທວນຄືນ

ກ. ແມ່ນໃຜຮັບຄຳປ້ອຍດ່າແທນເຮົາ? ______________________________

ຂ. ຮັບຢູ່ບ່ອນໃດ? ________________________________________

ຄ. ມີເງື່ອນໄຂປະການໃດ ເຮົາຈຶ່ງໄດ້ລອດໂດຍທາງພະເຢຊູ? _______________

ງ. ໃນບົດນີ້ ເຮົາຮຽນເລື່ອງຄົນໃດໃນພະຄຳພີເດີມທີ່ເຊື່ອໃນພະສັນຍາ? ___________

ຈ. ພະສັນຍາແກ່ອັບລາຮາມນັ້ນ ເພື່ອສະເພາະແຕ່ຄົນຢິວ ຫຼືຄົນທີ່ເຊື່ອທຸກຊາດ? _______

**9** ພະເຈົ້າບອກອັບລາຮາມວ່າ ເຖິງເຂົາອາຍຸສູງປານນັ້ນກໍຕາມຍັງຈະມີລູກຢູ່



( ປຖກ 21:1~5 ແລະ ຂໍ້ 9 )
( ປຖກ 17:17 )

ກ. ເມຍຫຼວງທີ່ອາຍຸສູງ ແຕ່ຍັງເກີດມີລູກທາງການອັດສະຈັນ ຊື່ຫຍັງ? ____________

ຂ. ເມຍນ້ອຍທີ່ເປັນທາດຊື່ຫຍັງ? ________________________________

ຄ. ເມຍທັງສອງມີລູກຊາຍແລ້ວ ຄົນໃດມີລູກທີ່ອາຍຸຫຼາຍກວ່າ? ______________

**10** ໂປໂລຍົກຜູ້ຍິງທັງສອງຄົນນັ້ນມາປຽບທຽບກັບຄຳສັນຍາຂອງພະເຈົ້າສອງປະການ.

ກ. ຜູ້ຍິງຄົນໃດປຽບທຽບກັບຄວາມເຊື່ອ? ____________________________

ຂ. ຄົນໃດປຽບທຽບກັບການເປັນທາດຂອງພະບັນຍັດ? ______________________

**11** ກ. ຣາຄານສະແດງເຖິງພະສັນຍາແກ່ໂມເຊ ຫຼື ອັບລາຮາມ? ______________________

ຂ. ຊາລາເດ? ______________________________________________

ຄ. ເມຍຄົນໃດເປັນທາດ? ______________________________________

**12** ອີກຫຼາຍປີ

ກ. ລູກຂອງຍິງທາດອາຍຸແກ່ກວ່າອີຊາກ 14 ປີ. ຖ້າຢ່າງນັ້ນຄົນໃດນ້ອຍກວ່າ?

_________________________

ຂ. ລູກຂອງທາດມີທ່າທີໃດຕໍ່ອີຊາກ?

_______ ຂົ່ມເຫງ

_______ ຮັກແພງ

_______ ຊ່ວຍຮັກສາ (ເລືອກ)




( ປຖກ 21:9 ແລະ ຄລຕ 4:29 )




( ປຖກ 21:10 )

**13** ເນື່ອງຈາກການຂົ່ມເຫັງ ພະເຈົ້າຈະໃຫ້ນາງຮາຄານເອົາລູກອອກໄປ ອັບລາຮາມຈຳເປັນຕ້ອງເຮັດຫຍັງກັບຮາຄານແລະລູກຊາຍ? ______________________

**14** ກ. ຕາມຕົວຢ່າງທີ່ຍົກມາຈາກພະຄຳພີເດີມສອງປະການນັ້ນ ຮາຄານແລະລູກຊາຍທີ່ຈະບໍ່ຮັບມໍລະດົກ ປຽບທຽບກັບຄຳສັນຍາແກ່ອັບລາຮາມ ຫຼືໂມເຊ? ____________________

ຂ. ຝ່າຍຊາລາກັບລູກອີຊາກທີ່ຈະຮັບມໍລະດົກແທ້ ປຽບທຽບກັບຄຳສັນຍາໃດ? _________




**15** ກ. ຕາມຮູບນີ້ ໂມເຊຮັບພະບັນຍາດຢູ່ພູໃດ?

______________________________

ຂ. ນາງຮາຄານ ກັບພູຊີນາອີໝາຍເຖິງ
ຄຳສັນຍາໃດ? ____________________

ຄ. ຜູ້ມາສອນບໍ່ຈິງມາຈາກກຸ່ງໃດ?

______________________________

ງ. ພະບັນຍັດຈະໃຫ້ມີຄວາມເສລີພາບ ຫຼື ໃຫ້ເປັນ
ຂ້ອຍຂ້າ? ______________________

**16** ໂປໂລຍົກຕົວຢ່າງຈາກພະຄຳພີເດີມເຫຼົ່ານີ້ ເພື່ອແຈ້ງໃຫ້ພີ່ນ້ອງຊາວຄາລາເຕຍເຂົ້າໃຈວ່າ ຈົ່ງປະຖິ້ມຈຳພວກຄົນທີ່ຈະໃຫ້ເຂົາຖືພະບັນຍັດເພື່ອໄດ້ລອດ. ຖ້າເຂົາຕິດຕາມພະບັນຍັດອີກຈະກັບກາຍ ເປັນທາດອີກ.

ກ. ສ່ວນຄົນທີ່ເຊື່ອໃນພະເຢຊູແທນທີ່ຈະເພິ່ງການກະທຳຂອງຕົນເອງ ຄົນນັ້ນອາໄສຄຳສັນຍາທີ່ໃຫ້ ແກ່ອັບລາຮາມ ຫຼື ໂມເຊ? ______________________________

ຂ. ສ່ວນຄົນທີ່ອາໄສການກະທຳດີຂອງຕົນເອງ ເຂົາອາໄສຄຳສັນຍາທີ່ໃຫ້ແກ່ໃຜ? _______

**17** ຕາມຄຳສອນຂອງໂປໂລໃນພະທຳຄາລາເຕຍ ແມ່ນລູກກະແຈໃດ ທີ່ຈະໄຂປະຕູ ແຫ່ງຄວາມລອດໃຫ້ຄົນບາບເຂົ້າໄປໄດ້? __________

______________________________



**18** ກ. ຮູບໃດຕໍ່ໄປນີ້ສະແດງເຖິງຄຳສັນຍາຕໍ່ອັບລາຮາມ (ຂ້າງຂວາຫຼືຂ້າງຊ້າຍ)? _________

_______________________________________________________________

ຂ. ຮູບໃດສະແດງເຖິງຄຳສັນຍາແກ່ໂມເຊ? ________________________________



**19** ກ. ໃນຄຳສັນຍາສອງຢ່າງນັ້ນ ຄຳສັນຍາໃດນຳໄປໃຫ້ເປັນອິສະລະ? _______________

_______________________________________________________________

ຂ. ຄຳສັນຍາໃດຈະນຳເຂົາກັບມາເປັນຂ້ອຍຂ້າອີກ? __________________________

**20** ໂປໂລສະຫລູບເລື່ອງຈາກພະຄຳພີເດີມໂດຍກ່າວດັ່ງຕໍ່ໄປນີ້: "ຈົ່ງຂັບໄລ່ຍິງຂ້ອຍຂ້າກັບລູກຊາຍຂອງນາງອອກໜີເສຍ ເພາະວ່າລູກຂອງຍິງຂ້ອຍຂ້ານັ້ນຈະຮັບ ມໍລະດົກຮ່ວມກັບລູກຂອງຍິງທີ່ບໍ່ເປັນຂ້ອຍຂ້ານັ້ນບໍ່ໄດ້". (ຈາກ ຄລຕ 4:30)

ກ. ແມ່ນລູກຂອງຍິງຂ້ອຍຂ້າ ຫຼື ລູກຂອງຍິງອິສະລະທີ່ຈະຮັບມໍລະດົກ? _____________

ຂ. ທີ່ເພິ່ນກ່າວເລື່ອງການຂັບໄລ່ຍິງຂ້ອຍຂ້າກັບລູກຊຶ່ງສະແດງເຖິງພະບັນຍັດໃຫ້ອອກມີເນື້ອຄວາມວ່າ ຈົ່ງຂັບໄລ່ຫຍັງອອກ? (ເລືອກ)

________ ໃຫ້ຜູ້ມາຈາກເຢລູຊາເລັມທີ່ສອນບໍ່ຈິງອອກ

________ ໃຫ້ຂັບໄລ່ໂປໂລເອງອອກ

________ ໃຫ້ຂັບໄລ່ບາລະນາບາອອກ

**21** ທີ່ຈະຕີຄວາມໝາຍໃນ ຄລຕ 4:21-31 ເປັນການຍາກ. ໃຫ້ທ່ານເປີດອ່ານອີກເທື່ອໜຶ່ງ (ໃຫ້ທ່ານອ່ານຂໍ້ຄວາມແລ້ວຂຽນຂໍ້ພະຄຳພີໃສ່)

ກ. ຄຳວ່າ "ເຈົ້າທັງຫຼາຍທີ່ຢາກຢູ່ໃຕ້ພະບັນຍັດ ພວກເຈົ້າບໍ່ໄດ້ຍິນພະບັນຍັດນັ້ນຫຼື ຈົ່ງບອກເຮົາດຸ " ເຫັນໃນຂໍ້ໃດ? _____________________________________________

ຂ. ມີຄຳສອນໃນພະຄຳພີເດີມວ່າ ອັບລາຮາມມີລູກຊາຍສອງຄົນ ຄົນໜຶ່ງເກີດຈາກຍິງຂ້ອຍຂ້າ ແລະອີກ ຄົນໜຶ່ງເກີດຈາກຍິງອິສະລະ ເຫັນໃນຂໍ້ໃດ? _______________________

ຄ. ລູກທີ່ເກີດຈາກຍິງຂ້ອຍຂ້າເກີດຕາມທຳມະຊາດ ລູກທີ່ເກີດຈາກຍິງບໍ່ເປັນຂ້ອຍຂ້ານັ້ນ ເກີດເປັນ ການອັດສະຈັນຕາມທີ່ພະເຈົ້າສັນຍາໄວ້ ເຫັນໃນຂໍ້ໃດ? ____________________

ງ. ທີ່ມີຄຳຂຽນໄວ້ໃນພະຄຳພີເດີມ (ອຊຢ 54:1)

"ໂອ ຍິງໝັນຜູ້ບໍ່ເກີດລູກເອີຍ ຈົ່ງຊົມຊື່ນຍິນດີເທີນ ຍິງຜູ້ບໍ່ເຈັບ
ທ້ອງເກີດລູກເອີຍ ຈົ່ງເປັ່ງສຽງໂຫ່ຮ້ອງ ເພາະວ່າລູກຂອງແມ່
ຮ້າງກໍຍັງມີຫຼາຍກວ່າລູກຂອງ ຍິງຜູ້ມີຜົວ". ເຫັນໃນຂໍ້ໃດ? _______________

ຈ. ທີ່ຍົກຕົວຢ່າງເລື່ອງຜູ້ຍິງສອງຄົນທີ່ປຽບທຽບຄຳສັນຍາສອງຢ່າງ ຜູ້ໜຶ່ງຄື ຮາຄານເກີດລູກທີ່ເປັນ ຂ້ອຍຂ້າຈຶ່ງໄດ້ຄຳສັນຍາມາຈາກພູຊີນາອີ (ຊີນາຍ) ເຫັນໃນຂໍ້ໃດ? ____________

ສ. ນາງຮາຄານນັ້ນໄດ້ແກ່ພູຊີນາອີໃນປະເທດອາລະເບຍ ກົງກັບກຸງເຢລູຊາເລັມ (ຜູ້ມາສອນບໍ່ຈິງ ມາຈາກກຸງເຢລູຊາເລັມ) ໃນປະຈຸບັນ ທີ່ຈະນຳໄປເປັນຂ້ອຍຂ້າໃນຂໍ້ໃດ? _________

ຊ. (ຂໍ້ກ່ອນອ້າງເຖິງກຸງເຢລູຊາເລັມທີ່ເປັນຕົວຈິງຊຶ່ງເຫັນກັບຕາໄດ້) ເຢລູຊາເລັມທີ່ຢູ່ເບື້ອງເທິງ (ສະຫວັນ) ເປັນອິສະລະແລະເປັນມານດາຂອງເຮົາທັງຫຼາຍ ເຫັນໃນຂໍ້ໃດ? __________

ຍ. ພວກຄຣິດສະຕຽນທຸກຄົນ ເປັນລູກຂອງພະສັນຍາເໝືອນຢ່າງອີຊາກ ເຫັນໃນຂໍ້ໃດ? _____

ດ. (ຄົນທີ່ຊື່ງຖືພະບັນຍັດຂົ່ມເຫັງຜູ້ທີ່ເຊື່ອໃນພະເຢຊູ) ໃນຄາວນັ້ນຜູ້ທີ່ເກີດຕາມທຳມະ ດາ ໄດ້ຂົ່ມເຫງຜູ້ທີ່ເກີດຕາມພະວິນຍານສັນໃດ ປະຈຸບັນນີ້ກໍເໝືອນການສັນນັ້ນ.
ເຫັນໃນຂໍ້ໃດ? ____________________________________________________

ຕ. ພະຄຳພີບອກວ່າ "ຈົ່ງຂັບໄລ່ຍິງຂ້ອຍຂ້າກັບລູກຊາຍຂອງນາງອອກໜີເສຍ ເພາະວ່າລູກຂອງຍິງ ຂ້ອຍຂ້ານັ້ນຈະຮັບມໍລະດົກຮ່ວມກັບລູກຂອງຍິງບໍ່ເປັນຂ້ອຍຂ້ານັ້ນບໍ່ໄດ້".
ເຫັນໃນຂໍ້ໃດ? ____________________________________________________

ຖ. ພວກເຮົາທີ່ເປັນຄຣິດສະຕຽນ ບໍ່ໄດ້ເປັນລູກຝ່າຍຂ້ອຍຂ້າ ແຕ່ເປັນລູກຝ່າຍອິສະລະ.
ເຫັນໃນຂໍ້ໃດ? ____________________________________________________

*ຈົ່ງຮັບພິຈາລະນາ*

*ຄຳທີ່ໂປໂລກ່າວໃນ ຄລຕ ບົດ 3 ແລະ 4 ທີ່ຍົກຫຼັກມາຈາກພະຄຳພີເດີມ ເປັນປະໂຫຍດຫຼາຍ. ໃນເມືອງອັນຕີໂອເຂຍ ເປໂຕກັບບາລະນາບາເຊື່ອແລະເຫັນພ້ອມ. ປາກົດວ່າຄົນໃນເຂດຄາລາ ເຕຍກໍເຊື່ອຄວາມຂອງໂປໂລດ້ວຍ.*

ຄຳຕອບ:

1 *ບົດທີ 3 ແລະ 4*

2 *ກ. ພະເຈົ້າຖືວ່າຄວາມເຊື່ອເປັນຄວາມຊອບທຳ.*

*ຂ. ພະຄຼິດຊົງໄຖ່ເຮົາພົ້ນຈາກຄວາມປ້ອຍດ່າ*

*ຄ. ເຮົາຮັບພະສັນຍາເປັນມໍລະດົກ*

*ງ. ເຮົາຮັບການປົດປ່ອຍຈາກເປັນທາດ*

3 *ກ. ຊາລາ ຂ. ຮາຄານ*

4 *ກ. ເມຍນ້ອຍ (ຮາຄານ) ຂ. ຊາລາເປັນໝັນ*

5 *ກ. ເຊື່ອ ຂ. ຄວາມເຊື່ອ*

6 *ກ. ຄຳໝັ້ນສັນຍາ ຂ. ເພື່ອທຸກຄົນທີ່ເຊື່ອ*

7 *ຂ ຄ ຖືກ*

8 *ກ. ພະເຢຊູ ຂ. ໄມ້ກາງແຂນ ຄ. ຕ້ອງເຊື່ອ ງ. ອັບລາຮາມ ຈ. ທຸກຊາດ*

9 *ກ. ຊາລາ ຂ. ຮາຄານ ຄ. ຮາຄານ*

10 *ກ. ຊາລາ ຂ. ຮາຄານ*

11 *ກ. ໂມເຊ ຂ. ອັບລາຮາມ ຄ. ຮາຄານ*

12 *ກ. ອີຊາກ ຂ. ຂົ່ມເຫັງ*

13 *ຕ້ອງອອກໄປ*

14 *ກ. ໂມເຊ ຂ. ຂອງອັບລາຮາມ*

15 *ກ. ຊີນາອີ ຂ. ພະບັນຍັດ ຄ. ເຢລູຊາເລັມ ງ. ໃຫ້ເປັນຂ້ອຍຂ້າ*

16 *ກ. ອັບລາຮາມ ຂ. ໂມເຊ*

17 *ລູກກະແຈ ເຊື່ອໃນພະເຢຊູ*

18 *ກ. ຂ້າງຂວາ ຂ. ຂ້າງຊ້າຍ*

19 *ກ. ຄວາມເຊື່ອໃນພະເຢຊູ (ອັບລາຮາມ) ຂ. ພະບັນຍັດ (ໂມເຊ)*

20 *ກ. ລູກອິສະລະ ຂ. ໃຫ້ຜູ້ມາຈາກເຢລູຊາເລັມທີ່ສອນບໍ່ຈິງອອກ*

21 *ກ. ຂໍ້ 21 ຂ. ຂໍ້ 22 ຄ. ຂໍ້ 23 ງ. ຂໍ້ 27 ຈ. ຂໍ້ 24 ສ. ຂໍ້ 25 ຊ. ຂໍ້ 26*

*ຍ. ຂໍ້ 28 ດ. ຂໍ້ 29 ຕ. ຂໍ້ 30 ຖ. ຂໍ້ 31*

**ການບ້ານບົດທີ 11 ພາກປາຍ**

# ຄຳປະກາດຂອງໂປໂລ

(ຄລຕ ບົດ 3 ແລະ 4)

*ທີ່ຜ່ານມາ ເຮົາຮຽນຄືນກ່ຽວກັບສ່ວນທຳອິດຂອງພະທຳຄາລາເຕຍ ຄື ຄລຕ ບົດທີ 1 ແລະ ບົດທີ 2 ແຕ່ຄັ້ງນີ້ ເຮົາທວນຄືນເລື່ອງໃນ ຄລຕ ບົດທີ 3 ແລະ 4.*

**1** ທັງຄລຕ ບົດທີ 3 ແລະ 4 ຍົກເອົາຜູ້ທີ່ເຊື່ອຈາກພະຄຳພີເດີມທີ່ເຮົາຮຽນມາໃນບົດກ່ອນຄື ພໍ່ຂອງອີຊາກ. ເພິ່ນຊື່ຫຍັງ? ____________________________________________

**2** ເຫັນຊື່ຂອງອັບລາຮາມຫຼາຍເທື່ອໃນສອງບົດນັ້ນ.

ກ. ໃນ ຄລຕ ບົດທີ 3 ຂໍ້ໃດທີ່ເຫັນຊື່ "ອັບລາຮາມ" ເປັນເທື່ອທຳອິດ? ________________

ຂ. ຄລຕ ບົດທີ 4 ຈົບລົງໂດຍກ່າວເລື່ອງຜູ້ຍິງສອງຄົນ. ທັງສອງຄົນນັ້ນເປັນເມຍຂອງໃຜ?

______________________________________________________________

**3** ເຮົາຈະຮຽນ ຄລຕ ບົດ 3 ແລະ 4 ຮ່ວມກັນອີກ. ເພື່ອຈະຕໍ່ຕ້ານຄົນທີ່ມາຈາກເຢລູຊາເລັມສອນໃຫ້ພີ່ນ້ອງກັບໄປຖືພະບັນຍັດ ໂປໂລຍົກເລື່ອງມໍລະດົກທີ່ພະເຈົ້າສັນຍາໃຫ້ອັບລາຮາມມາເປັນຕົວຢ່າງ.

ກ. ໃນ ຄລຕ 3:18 ພະເຈົ້າສັນຍາຫຍັງ? ____________________________________

ຂ. ສັນຍາໃຫ້ໃຜ? ____________________________________________________

*ໃຫ້ສັງເກດວ່າ ບໍ່ໄດ້ມາທາງພະບັນຍັດຂອງໂມເຊ*

**4** ໃຫ້ທວນຄືນເລື່ອງຄວາມເຊື່ອຂອງອັບລາຮາມ.

ກ. ອັບລາຮາມຈະຮັບສິ່ງໃດເປັນມໍລະດົກ? (ເລືອກ)

________ ເງິນ ________ ຄຳເວົ້າ ________ ປະເທດ

ຂ. ພະເຈົ້າສັນຍາວ່າ ຈະມີໃຜຮັບມໍລະດົກນັ້ນ? (ເລືອກ)

________ ເມຍນ້ອຍ ________ ລູກ ________ ນັກກົດໝາຍ

# ເລື່ອງມໍລະດົກ

**5** ກ. ພະເຈົ້າສັນຍາວ່າຈະໃຫ້ເຊື້ອສາຍຂອງອັບລາຮາມຮັບປະເທດໃດເປັນມໍລະດົກ?
(ປຖກ 17:8) ____________________________________________

ຂ. ປະເທດທີ່ເຊື້ອສາຍຂອງອັບລາຮາມຈະຮັບນັ້ນ ແມ່ນປະເທດຕົວຈິງທີ່ເຫັນກັບຕາໄດ້ ແຕ່ຍິ່ງກວ່າ ນັ້ນອີກ ປະເທດນັ້ນຈະມີລັກສະນະໃດ? (ເລືອກເອົາ 2 ປະການ)

_______ ປະເທດບໍ່ມີເວລາສິ້ນສຸດ

_______ ປະເທດສະຫວັນ

_______ ປະເທດທີ່ຝັນເອົາ

**6** ກ. ມະນຸດເຄີຍໃຊ້ຫຍັງເປັນການຮັບຮອງວ່າບໍ່ມີຜູ້ໃດຈະລົ້ມເລີກ ຫຼືເພີ້ມເຕີມອີກໄດ້?
(ຄລຕ 3:15) ____________________________________________

ຂ. ພະເຈົ້າໃຫ້ຄຳສັນຍາແກ່ອັບລາຮາມ ແລ້ວອີກ 430 ປີ ພະເຈົ້າໃຫ້ພະບັນຍັດແກ່ໂມເຊ. ຖ້າ ຄຳສັນຍາຂອງມະນຸດ (ພິໄນກຳ)ທີ່ຖືກຮັບຮອງແລ້ວບໍ່ມີການປ່ຽນແປງ ພະສັນຍາຂອງພະເຈົ້າຍິ່ງ ປ່ຽນແປງບໍ່ໄດ້. ພະບັນຍັດຂອງໂມເຊທີ່ມາຫຼັງຈາກພະສັນຍາແກ່ອັບລາຮາມຈະແທນບ່ອນພະສັນຍາໄດ້ບໍ່? ________________________________

ຕະຫຼອດຍຸກສະໄໝລະຫວ່າງໂມເຊເຖິງພະເຢຊູ ເປັນຍຸກສະໄໝຂອງພະບັນຍັດກໍ່ວ່າໄດ້ ແຕ່ພະ ສັນຍາແກ່ອັບລາຮາມບໍ່ລົ້ມເລີກ.

**7** ຕາມໃນ ຄລຕ 3:15 ຄຳສັນຍາທີ່ຮັບຮອງແລ້ວບໍ່ມີຜູ້ໃດຈະ ____________________ ຫຼື ________________________ ໄດ້ອີກ. (ຕື່ມຄວາມຂາດ)

**8** ກ. ຕາມໃນ ຄລຕ 3:17 ພະບັນຍັດຂອງໂມເຊມາຕາມຫຼັງພະສັນຍາແກ່ອັບລາຮາມ ຈັກປີ?

____________________________________________________________

ຂ. ແຕ່ພະບັນຍັດນັ້ນຈະເຮັດໃຫ້ພະສັນຍາໂມຄະໄດ້ບໍ່? ______________________

ຄ. ແມ່ນໃຜເຮັດໃຫ້ພະບັນຍັດຍົກເລີກ? (ໂລມ 10:4) ______________________

ງ. ແມ່ນອັນໃດທີ່ບໍ່ມີວັນເວລາຍົກເລີກຈົນສຳເລັດ? (ເລືອກ)

_______ ພະບັນຍັດຂອງໂມເຊ

_______ ພະສັນຍາແກ່ອັບລາຮາມ

**9** ກ. ພະສັນຍາແກ່ອັບລາຮາມມາກ່ອນ. ຫຼັງຈາກນັ້ນ 430 ປີມີຫຍັງມາ? _____________

ຂ. ແມ່ນສິ່ງໃດທີ່ລົ້ມເລີກຫຼືເພີ້ມເຕີມບໍ່ໄດ້? ______________________________

**10** ກ. ພະເຈົ້າສັນຍາມອບມໍລະດົກໃຫ້ໃຜ? ________________________________

ຂ. ກ່ອນພະບັນຍັດຈັກປີ? __________________________________________

## ຜູ້ຮັບມໍລະດົກ

**11** ຖ້າມີມໍລະດົກຕ້ອງມີຜູ້ຮັບມໍລະດົກ. ໃຫ້ອ່ານ ຄລຕ 3:16.
ເຊື້ອສາຍຂອງອັບລາຮາມທີ່ຈະມານັ້ນຄືໃຜ? ________________________________

**12** ພະສັນຍາແກ່ອັບລາຮາມສຳເລັດໃນພະເຢຊູຄຣິດ ແຕ່ບໍ່ແມ່ນເພື່ອພະເຢຊູອົງດຽວ. ໃຫ້ອ່ານ ຄລຕ 3:29 ແລະ ຄລຕ 4:7.
ຕາມສອງຂໍ້ພະຄຳພີນັ້ນ ແມ່ນໃຜທີ່ຈະຮັບມໍລະດົກພ້ອມກັບພະເຢຊູ? (ເລືອກ)
ກ. ທຸກຄົນໃນໂລກ ເຖິງຈະເຊື່ອຫຼືບໍ່ເຊື່ອກໍຕາມ
ຂ. ທຸກຄົນທີ່ເຊື່ອໃນພະເຢຊູ ບໍ່ວ່າຊາດຢິວຫຼືຄົນຕ່າງຊາດ
ຄ. ສະເພາະແຕ່ຄົນຢິວ

**13** ເຖິງວ່າອັບລາຮາມອາດຈະເຂົ້າໃຈວ່າ ພະສັນຍານັ້ນອ້າງເຖິງປະເທດການາອານກໍຕາມ ແຕ່ທີ່ຈິງ ມີຄວາມໝາຍຢ່າງກວ້າງກວ່ານັ້ນອີກ. ເພາະອ້າງເຖິງການຮັບມໍລະດົກທີ່ບໍ່ມີວັນສິ້ນສຸດຈັກເທື່ອໃນຟ້າສະຫວັນ.
ກ. ມໍລະດົກຝ່າຍວິນຍານນັ້ນຈະຮັບຢູ່ໃສ? ________________________________
ຂ. ຈະຢູ່ນານເຖິງຂະໜາດໃດ? ________________________________________
ເນື້ອຄວາມຂອງ ຄລຕ ບົດ 3 ແລະ 4 ຄືມໍລະດົກ.

| |
|---|
| ໃຫ້ເອົາສໍສີຂຽວຂີດກ້ອງຄຳ "ມໍລະດົກ" ຕາມຂໍ້ຕໍ່ໄປນີ້: |
| ຄລຕ 3:18 |
| ຄລຕ 3:29 |
| ຄລຕ 4:1 |
| ຄລຕ 4:7 |
| ຄລຕ 4:30 |

**14** ສະຫລູບເລື່ອງ
ກ. ເນື້ອເລື່ອງໃນ ຄລຕ ບົດ 3 ແລະ 4 ກ່າວເລື່ອງຜູ້ໃດໃນພະຄຳພີເດີມ? ____________
ຂ. ພະເຈົ້າສັນຍາຈະໃຫ້ທັງເຊື້ອສາຍເພິ່ນຮັບຫຍັງ? ___________________________

**15** ທວນຄືນ: ພະເຈົ້າສັນຍາມໍລະດົກໃຫ້ອັບລາຮາມແລະເຊື້ອສາຍຂອງເພິ່ນ.
ກ. ແມ່ນບຸດຄົນໃດທີ່ຈະເປັນຜູ້ຮັບມໍລະດົກນັ້ນ? _____________________________
ຂ. ແລະພວກຄົນໃດທີ່ຈະຮັບພ້ອມໃນພະເຢຊູ? _____________________________

**16** ສ່ວນ ຄລຕ ບົດ 3 ແລະ 4 ນີ້ ເລີ່ມຕົ້ນແມ່ນກ່ຽວກັບອັບລາຮາມ ແລະຈົບລົງໃນເລື່ອງດຽວກັນ. ເລີ່ມຕົ້ນ ກ່າວເລື່ອງເມຍທັງສອງຂອງອັບລາຮາມຄື ນາງຊາລາ ແລະນາງຮາຄານ.
ກ. ເມຍຄົນໃດບໍ່ເປັນຂ້ອຍຂ້າ? ________________________________________
ຂ. ຄົນໃດເປັນຂ້ອຍຂ້າ? ____________________________________________

**17** ໃຫ້ອ່ານ ຄລຕ 4:24 ເມຍແຕ່ລະຄົນນັ້ນປຽບທຽບກັບພະສັນຍາແຕ່ລະປະການ.

ກ. ຊາລາເມຍທີ່ບໍ່ເປັນຂ້ອຍຂ້າ ປຽບທຽບພະສັນຍາກັບໃຜ? ____________________

ຂ. ຮາຄານຜູ້ທີ່ເປັນຂ້ອຍຂ້າ ປຽບທຽບກັບພະສັນຍາແກ່ໃຜ? ____________________

**18** ໂປໂລສະແດງວ່າຜູ້ທີ່ສອນບໍ່ຈິງຫຼົງຜິດໃນທຳນອງດຽວກັນກັບລູກຂອງຮາຄານ ຊຶ່ງເປັນຂ້ອຍຂ້າ. (ຄລຕ 4:29)

ກ. ລູກຂອງຂ້ອຍຂ້າເຮັດຫຍັງກັບລູກອິສະລະ? ______________________________

ຂ. ຜູ້ທີ່ສອນບໍ່ຈິງເຮັດຫຍັງກັບພີ່ນ້ອງຄຼິດສະຕຽນຢູ່ຄາລາເຕຍ? __________________

**19** ໃນຄລຕ 4:30 ໂປໂລກ່າວຕໍ່ເລື່ອງມໍລະດົກ

ກ. ອັບລາຮາມຕ້ອງສັ່ງໃຫ້ຮາຄານເອົາລູກໄປໃສ? ____________________________

ຂ. ລູກຂອງຂ້ອຍຂ້າຈະບໍ່ຮັບຫຍັງ? ______________________________________

**20** ໂປໂລຍົກເລື່ອງຈາກພະຄຳພີເດີມທີ່ຄົນຢິວຖືໝັ້ນ ເພື່ອຊີ້ບອກຢ່າງແຈ້ງກ່ຽວກັບການສອນຜິດຂອງເຂົາ

ກ. ຢ່າງລູກຂອງຍິງຂ້ອຍຂ້າຈະບໍ່ຮັບມໍລະດົກຕາມພະສັນຍາ ຜູ້ສອນບໍ່ຈິງຈະບໍ່ຮັບຫຍັງຕາມພະສັນຍາ?______________________________________________________

ຂ. ຢ່າງທີ່ລູກຍິງຂ້ອຍຂ້າຈະຕ້ອງຖືກຂັບໄລ່ ເຂົາຄວນເຮັດຫຍັງກັບຜູ້ມາສອນບໍ່ຈິງ?

______________________________________________________________

**21** ດັ່ງແຕ່ໃນເວລາຈະຈົບເລື່ອງລົງ ໂປໂລມີຄວາມຫວັງ

ກ. ຕາມ ຄລຕ 4:31 ພວກເຮົາທີ່ໄວ້ວາງໃຈໃນພະເຢຊູຈຶ່ງຈະໄດ້ລອດ ພວກເຮົານັ້ນ ເປັນລູກຂອງຍິງໃດ? ____________________________________________________

ຂ. ຖ້າເຮົາເປັນລູກຂອງອັບລາຮາມດ້ານວິນຍານຢ່າງນັ້ນ ຕາມພະສັນຍາເຮົາມີສິດຮັບຫຍັງ?

______________________________________________________________

**22** ກ. ໂປໂລພິສູດຈາກພະຄຳພີເດີມຊຶ່ງຄົນເຫຼົ່ານັ້ນຖື ວ່າຜູ້ທີ່ຖືພະບັນຍັດຂອງໂມເຊທີ່ຈະຮັບມໍລະ ດົກ ແຕ່ຄວາມຈິງແລ້ວແມ່ນພວກໃດ? ____________________________

ຂ. ຜູ້ສອນບໍ່ຈິງ ຈະບໍ່ມີສິດຮັບຫຍັງ? ____________________________________

ຄ. ຄວນເຮັດຢ່າງໃດ? ____________________________________________

ຄຳຕອບ:

**1** *ອັບລາຮາມ*

**2** *ກ. ຂໍ້ 6 ຂ. ຂອງອັບລາຮາມ*

**3** *ກ. ມໍລະດົກ ຂ. ອັບລາຮາມ*

**4** *ກ. ປະເທດ ຂ. ລູກ*

**5** *ກ. ການາອານ ຂ. ປະເທດບໍ່ມີເວລາສິ້ນສຸດ ປະເທດສະຫວັນ*

**6** *ກ. ຄຳສັນຍາ ຂ. ບໍ່ແທນ*

**7** *ລົ້ມເລີກ. .. ເພີ່ມເຕີມ*

**8** *ກ. 430 ປີ ຂ. ບໍ່ໄດ້ ຄ. ພະຄຼິດ ງ. ພະສັນຍາແກ່ອັບລາຮາມ*

**9** *ກ. ພະບັນຍັດ ຂ. ພະສັນຍາ*

**10** *ກ. ໃຫ້ອັບລາຮາມ ຂ. 430 ປີ*

**11** *ພະຄຼິດ*

**12** *ຂ ຖືກ*

**13** *ກ. ຟ້າສະຫວັນ ຂ. ຢູ່ຕະຫຼອດໄປເປັນນິດ*

**14** *ກ. ອັບລາຮາມ ຂ. ມໍລະດົກ*

**15** *ກ. ພະເຢຊູ ຂ. ຄົນທີ່ເຊື່ອໃນພະອົງ (ຄຼິດສະຕຽນ)*

**16** *ກ. ຊາລາ (ເມຍຫຼວງ) ຂ. ຮາຄານ (ເມຍນ້ອຍ)*

**17** *ກ. ອັບລາຮາມ ຂ. ໂມເຊ*

**18** *ກ. ຂົ່ມເຫັງ ຂ. ຂົ່ມເຫັງ*

**19** *ກ. ຂັບໄລ່ໃຫ້ອອກ ຂ. ມໍລະດົກ*

**20** *ກ. ມໍລະດົກ ຂ. ຄວນຂັບໄລ່*

**21** *ກ. ຍິງບໍ່ເປັນຂ້ອຍຂ້າ ຂ. ມໍລະດົກ*

**22** *ກ. ຜູ້ທີ່ໄວ້ວາງໃຈໃນພະເຢຊູ ຂ. ມໍລະດົກ ຄ. ຂັບໄລ່ໃຫ້ອອກ*

## ໃນການປະຊຸມບົດທີ 11

# ສ່ວນປະກອບຂອງພະທຳຄາລາເຕຍ

(ຄລຕ ບົດທີ 1 ເຖິງບົດທີ 6)

**1** ທີ່ຜ່ານມາ ເຮົາຮຽນສ່ວນທຳອິດໃນພະທຳຄາລາເຕຍ ຄື ຄລຕ ບົດທີ 1 ແລະບົດທີ 2. ໃຫ້ທວນຄືນກ່ອນ

ກ. ເນື້ອຄວາມໃນ ຄລຕ ບົດທີ 1 ແລະ 2 ຄືຫຍັງ? ______________________________

ຂ. ເປັນຫຍັງໂປໂລເນັ້ນຄຳໃນເລື່ອງນັ້ນ? ____________________________________

________________________________________________________________

________________________________________________________________

ຄ. ໃນພະທຳ ຄລຕ ບົດທີ 1 ແລະສອງນັ້ນ ເພິ່ນກ່າວເລື່ອງປະຫວັດຊີວິດໃຜເປັນຕົ້ນ? _____

________________________________________________________________

________________________________________________________________

ຕໍ່ໄປນີ້ເຫັນມີຕາຕະລາງທີ່ສະແດງເຖິງສ່ວນປະກອບຂອງພະທຳຄາລາເຕຍ

| | ຄລຕ ບົດ 1 ແລະ 2 | ຄລຕ ບົດ 3 ແລະ 4 | ຄລຕ ບົດ 5 ແລະ 6 |
|---|---|---|---|
| ເນື້ອ ເລື່ອງ | | | |
| ຜູ້ ສຳຄັນ | | | |

**2** ກ. ເນື້ອເລື່ອງໃນ ຄລຕ ບົດ ທີ 1 ແລະ 2 ຄືຫຍັງ? ______________________________

| ໃຫ້ຈົດຕາມບ່ອນຖືກຕ້ອງໃນຕາຕະລາງ |
|---|

ຂ. ຜູ້ສຳຄັນໃນ ຄລຕ ບົດທີ 1 ແລະ 2 ຄືໃຜ? __________________________________

| ໃຫ້ຈົດໄວ້ໃນຕາຕະລາງ ຕາມບ່ອນທີ່ຖືກ |
|---|

*ໃນການບ້ານບົດຮຽນທີ 11 ທັງສອງພາກ ເຮົາຮຽນມາເລື່ອງສ່ວນທີສອງຂອງ ພະທຳ ຄາລາເຕຍ ຄື ຄລຕ ບົດທີ 3 ແລະ 4*

**3** ກ. ເນື້ອເລື່ອງນັ້ນຄື ຄຳປະກາດຂອງໃຜ? ____________________________________

| ໃຫ້ຈົດຕາມບ່ອນທີ່ຖືກຕ້ອງໃນຕາຕະລາງ |
|---|

ຂ. ຜູ້ສຳຄັນໃນ ຄລຕ ບົດ 3 ແລະ 4 ຄືໃຜ? __________________________________

| ໃຫ້ຈົດໄວ້ໃນຕາຕະລາງ ຕາມບ່ອນທີ່ຖືກ |
|---|

*ເນື້ອເລື່ອງສ່ວນສຸດທ້າຍໃນ ຄລຕ ບົດທີ 5 ແລະ 6 ຄືຊີວິດໃໝ່ໃນພະເຢຊູ*

| ໃຫ້ຈົດຄຳວ່າ "ຊີວິດໃໝ່ໃນພະເຢຊູ" ໃຫ້ຖືກກັບບ່ອນໃນຕາຕະລາງ |
|---|

**4** ໃຫ້ຄົນໜຶ່ງອ່ານ ຄລຕ 5:5 5:16 5:17 5:18 5:22 5:25 6:1 ແລະ 6:8
ເຫັນຊື່ໃດເປັນຜູ້ສຳຄັນໃນ ສ່ວນສຸດທ້າຍນີ້? __________________________________

| ໃຫ້ຈົດຄຳວ່າ "ພະວິນຍານ" ຖືກກັບບ່ອນໃນຕາຕະລາງ |
|---|

*ຖ້າຈົດຄວາມໃນຕາຕະລາງສຳເລັດໃຫ້ທ່ານຈີ້ທຸກສ່ວນ*

- *ໝາຍເຫດ: ໃນຕາຕະລາງຕໍ່ໄປນີ້ໃຫ້ຊຽນຄຳຫຍໍ້ວ່າ 1 ຕ ໝາຍຄວາມວ່າ: ການບ້ານ ບົດທີ 1 ພາກຕົ້ນ ມີຄຳຫຍໍ້ວ່າ 1 ປ ແປວ່າ ການບ້ານບົດທີ 1 ພາກປາຍ ແລະຄຳຫຍໍ້ 1 ຊ ແປວ່າ ໃນການປະຊຸມບົດທີ 1 ໆ ລ ໆ*

| ບົດແລະຂໍ້ໃນພະທຳຄາລາເຕຍ | ການພະເຊີນຕໍ່ສະຖານະການໃນຄຼິດສະຕະຈັກຄາລາເຕຍ | ສ່ວນໃນເນື້ອຄວາມພະທຳຄາລາເຕຍ | ບົດຮຽນ |
|---|---|---|---|
| **1 ແລະ 2** | ໂປໂລເປັນອັກຄະສາວົກແທ້ | | 9ຊ 10ຊ |
| • 1:1-10 | ຄຼິດສະຕະຈັກຄາລາເຕຍ (ຄຳແນະນຳ) | | 1ຊ |
| 1:11-24 | | • ພະເຍຊູສະແດງຂ່າວປະເສີດ | 9ຊ 5ປ |
| 2:1-10 | | • ອັກຄະສາວົກຄົນອື່ນຮັບຮູ້ | 7ປ |
| 2:11-21 | | • ໂປໂລຕໍ່ວ່າເປໂຕເວລາຜິດພາດ | 10ຕ 10ປ |
| **3 ແລະ 4** | ຄຳປະກາດຂອງໂປໂລ | | 11ປ |
| • 3:1-5 | ຄຼິດສະຕຽນທີ່ຫົວແຂງ | | 13ຕ |
| 3:6-9 | | • ພະເຈົ້າຖືວ່າຄວາມເຊື່ອເປັນຄວາມຊອບທຳ | 2ຊ |
| 3:10-14 | | • ພະຄຼິດຊົງໄຖ່ເຮົາໃຫ້ພົ້ນຈາກຄວາມປ້ອຍດ່າ | 4ຊ |
| 3:15-4:7 | | • ເຮົາຮັບພະສັນຍາເປັນມໍລະດົກ | 3,5,6,7ຊ |
| • 4:8-20 | ໂປໂລເປັນຫ່ວງຜູ້ທີ່ຮັບເຊື່ອ | | 8ຊ |
| 4:21-31 | | • ເຮົາຮັບການປົດປ່ອຍຈາກການເປັນທາດ | 11ຕ |
| **5 ແລະ 6** | ຊີວິດໃໝ່ໃນພະເຍຊູຄຼິດ | | |
| • 5:1-15 | ຕັ້ງໝັ້ນໃນເສລີພາບ | | 12ຕ 12ປ |
| 5:16-26 | | • ຜົນຂອງພະວິນຍານ | 12ຊ |
| 6:1-5 | | • ຄຼິດສະຕຽນທີ່ຢູ່ຝ່າຍພະວິນຍານ | 13ຕ |
| 6:6-10 | | • ການຫວ່ານຕາມພະວິນຍານ | 13ປ |
| • 6:11-18 | ການເຕືອນໃຈຕອນສຸດທ້າຍ | | 13ຊ |

ໝາຍເຫດ: (ປ) ໝາຍເຖິງ ພາກປາຍ.
(ຊ) ໝາຍເຖິງ ໃນການປະຊຸມ.
(ຕ) ໝາຍເຖິງ ພາກຕົ້ນ.

*ໃນຕາຕະລາງທີ່ຜ່ານມານັ້ນ ພວກທ່ານບໍ່ໄດ້ຮຽນໝົດເທື່ອ ແຕ່ຂໍໃຫ້ທ່ານ ຈົ່ງລື້ງເຄີຍ ເພາະໃນອະນາຄົດຢາກໃຫ້ຈື່ເລື່ອງນັ້ນທັງໝົດ.*

**5** ມາເຖິງນີ້ ພວກເຮົາສຶກສາເລື່ອງຫຼັກຄວາມເຊື່ອ ຄືເນື້ອຄວາມຂອງພະທຳຄາລາເຕຍ ແຕ່ເຫັນວ່າ ມີ 5 ເທື່ອ (ໃນຕາຕະລາງນັ້ນ)ທີ່ໂປໂລກັບຄືນຜະເຊີນຕໍ່ສະຖານະການໃນຄຼິດສະຕະຈັກຄາລາເຕຍ ບັນຫາໃນຄຼິດສະຕະຈັກຄາລາເຕຍຄືຫຍັງ? ____________________________

______________________________________________________________________

______________________________________________________________________

**6** ໃນພະທຳຄາລາເຕຍ ອາຈານໂປໂລມີທ່າທີຄ້າຍຄືກັບພໍ່ທີ່ຮ້ອງຂໍຕໍ່ລູກທີ່ຫຼົງຜິດ. ຕໍ່ໄປນີ້ເຮົາຈະສຶກສາ ຂໍ້ພະຄຳພີທີ່ໂປໂລຜະເຊີນຕໍ່ບັນຫານັ້ນ. ຕອນພະຄຳພີເຫຼົ່ານັ້ນ ທີ່ໝາຍໄວ້ໂດຍ ເຫັນມີຈັກຕອນ? ____________________________________________________________

**7** ຕອນທຳອິດຄື ຄລຕ 1:1-10 ທີ່ເຮົາຮຽນມາແລ້ວໃນບົດຮຽນ 1ຊ. ໃຫ້ອ່ານ ຄລຕ 1:6-7 ອີກ.
ກ. ໃນຂໍ້ 6 ໂປໂລປະຫຼາດໃຈທີ່ເຂົາເຮັດຫຍັງຢ່າງຮີບດ່ວນ? ______________________
ຂ. ເຫັນວ່າມີບາງຄົນທີ່ເຮັດໃຫ້ເຂົາວຸ້ນວາຍໂດຍການປະກາດຂ່າວປະເສີດອັນໃດ? _______

**8** ຕອນທີ່ຜະເຊີນຕໍ່ບັນຫາປະການທີສອງຄື ຄລຕ 3:1-5 ທີ່ຮຽນມາໃນບົດ 13 ຕ.
ກ. ໃນເມື່ອໂປໂລຍັງຢູ່ກັບເຂົາເປັນຢ່າງໃດ?(ຕັ້ງແຕ່ຂໍ້ທີ 8-11 ບໍ່ມີຄຳຕອບຕາຍຕົວ,ຄຳຕອບຂ້າງລຸ່ມ ພຽງແຕ່ຍົກມາໃຫ້ຮູ້ບາງສ່ວນ) ____________________________________

______________________________________________________________________

______________________________________________________________________

ຂ. ແລະຫຼັງຈາກໂປໂລໄປແລ້ວມີຫຍັງເກີດຂຶ້ນ?

______________________________________________________________________

______________________________________________________________________

______________________________________________________________________

______________________________________________________________________

**9** ຕອນທີສາມຄື ຄລຕ 4:8-20 ທີ່ເຮົາຮຽນມາໃນບົດຮຽນ 8ຊ. ໃຫ້ອ່ານຕອນນັ້ນທັງໝົດ

ກ. ກ່ອນທີ່ໂປໂລໄປຢ້ຽມ ຊາວຄາລາເຕຍເຂົາເປັນຢ່າງໃດ?

____________________________________________________________

____________________________________________________________

ຂ. ເມື່ອໂປໂລຢູ່ກັບເຂົາເປັນຢ່າງໃດ?

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

ຄ. ຫຼັງຈາກໂປໂລຈາກເຂົາໄປເປັນຢ່າງໃດ?

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

**10** ຕອນທີສີ່ຄື ຄລຕ 5:1-15 ທີ່ຮຽນມາໃນບົດຮຽນ 12ຕ ແລະ 12ປ. ໃຫ້ອ່ານທັງ 15 ຂໍ້. ຕອນນີ້ສອນຢ່າງໃດກ່ຽວກັບສະພາບໃນຄາລາເຕຍ?

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

**11** ຕອນທີ ຫ້າ ຄື ຄລຕ 6:11-18. ເລື່ອງນີ້ເຮົາຈະຮຽນຢ່າງລະອຽດໃນບົດຮຽນທີ 13ຂ. ໃຫ້ ອ່ານທັງ 7 ຂໍ້ແລ້ວສັງເກດສະພາບໃນຄາລາເຕຍ.

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

**12** ໃຫ້ທ່ານກັບໄປເບິ່ງຕາຕະລາງໜ້າ 187 ອີກ. ເຮົາອາດຈະຖືວ່າເນື້ອຄວາມສຳຄັນທັງ 3 ສ່ວນໃນພະທຳຄາລາເຕຍເປັນຜົນຜະລິດທີ່ເກີດຈາກສະຖານະການໃນຄາລາເຕຍ. ຕົ້ນໄມ້ຈະເກີດໃຫ້ມີ ຜົນດີຈາກຂີ້ດິນທີ່ມີຝຸ່ນ. ສະຖານະການໃນ ຄາລາເຕຍເປັນທີ່ໃຫ້ເກີດມີຜົນດີ ຄືຫຼັກຄວາມເຊື່ອທີ່ ໂປໂລຂຽນໄວ້ເພື່ອຄູ້ດສະຕະຈັກ ຄາລາເຕຍ. ມີເນື້ອຄວາມສຳຄັນ 3 ປະການໃດ?

ກ. ________________________________________________________

ຂ. ________________________________________________________

ຄ. ________________________________________________________

*ທຳມະດາ ເຮົາຖືວ່າຂີ້ງົວຂີ້ຄວາຍເປັນສິ່ງເປື້ອນເປິແຕ່ສ່ວນໃດທີ່ມີຝຸ່ນດີນັ້ນ ເປັນສ່ວນທີ່ມີຜົນດີ. ສະຖານະການໃນຄູ້ດສະຕະຈັກຄາລາເຕຍເຮົາກໍອາດຈະຖືວ່າເປື້ອນເປິ ແຕ່ມີຜົນດີທີ່ອາຈານຂຽນພະທຳຄາລາເຕຍເພື່ອເປັນທີ່ເຕືອນຄູ້ດສະຕຽນເຮົາ ໃນທຸກບ່ອນແລະທຸກສະໄໝ. ມີເຖິງວັນນີ້ ແລະ ໃນປະເທດນີ້.*

ໃຫ້ຄົນໜຶ່ງອ່ານ ຄລຕ 6:14-15 ແລ້ວໂດຍສຳນຶກເລື່ອງໃນສອງຂໍ້ນັ້ນແລ້ວໃຫ້ອ້ອນວອນດ້ວຍກັນ.

## ການບ້ານ

ໃຫ້ທ່ານຮຽນຮູ້ຕາຕະລາງໃນໜ້າ 187 ດີໆ ຈຶ່ງຈະຈື່ເລື່ອງໄດ້ ການບ້ານບົດທີ 12ຕ ແລະ 12ປ ຈະເລີ້ມຕົ້ນດ້ວຍການຮຽນສະຖານະການ ຕອນທີ 4 (ຄລຕ 5:1-15) ແລ້ວຈະຮຽນຕໍ່ໃນສ່ວນເນື້ອຄວາມຈາກ ຄລຕ ບົດທີ 5 ແລະ 6 ຄື "ຊີວິດໃໝ່ໃນພະເຢຊູ".

ຄຳຕອບ:

**1** *ກ. ໂປໂລເປັນອັກຄະສາວົກແທ້ຈິງ*

*ຂ. ເພິ່ນຕໍ່ຕ້ານຄົນທີ່ສອນບໍ່ຈິງຊຶ່ງຫາວ່າໂປໂລບໍ່ແມ່ນອັກຄະສາວົກແທ້. ເພິ່ນພິສູດວ່າ ພະເຢຊູຄຣິດກັບພະບິດາເຈົ້າຊົງຕັ້ງເພິ່ນໄວ້ເປັນອັກຄະສາວົກ ບໍ່ແມ່ນມະນຸດ (ຄຳຄ້າຍຄືກັນກໍໄດ້)*

*ຄ. ກ່າວເລື່ອງຊີວິດຂອງເປໂຕເອງ. ດັ່ງນັ້ນເປັນໂອກາດດີທີ່ຈະຮຽນຄືນເລື່ອງ ປະຫວັດຊີວິດເພິ່ນ ຕັ້ງແຕ່ເກີດຈົນເຖິງທີ່ຈະຂຽນຈົດໝາຍສະບັບນີ້.*

**2** *ກ. ໂປໂລເປັນອັກຄະສາວົກ ຂ. ໂປໂລ*

**3** *ກ. ຄຳປະກາດຂອງໂປໂລ ຂ. ອັບລາຮາມ*

**4** *ພະວິນຍານ*

**5** *ຄົນທີ່ສອນບໍ່ຈິງມາຈາກເຢລູຊາເລັມ ທຳລາຍຄວາມເຊື່ອຂອງຄຣິດສະຕຽນໃໝ່*

**6** *5 ຕອນ*

**7** *ກ. ລະຖິ້ມພະອົງ ຂ. ອັນອື່ນ*

**8** *ກ. ເຂົາຮັບຟັງເລື່ອງການຄຶງພະເຢຊູໄວ້ (ຂໍ້ 1)*
*ເຂົາຕັ້ງຕົ້ນໂດຍທາງພະວິນຍານ (ຂໍ້ 2)*
*ເຂົາເຊື່ອຟັງຂໍ້ຄວາມທີ່ໄດ້ຍິນແລ້ວເຫັນການອິດທິລິດ (ຂໍ້ 5)*

*ຂ. ເຂົາຕົກໃຕ້ອິດທິພົນຂອງພວກຜູ້ສອນບໍ່ຈິງ (ຂໍ້ 1)*
*ເຂົາເລີ້ມຕົ້ນໂດຍພະວິນຍານ ແຕ່ຈະສຳເລັດລົງໂດຍທາງທຳມະດາມະນຸດ (ຂໍ້ 3)*
*ໂປໂລຫາວ່າເຂົາບໍ່ມີຄວາມຄິດ (ຂໍ້ 1) ແລະໂງ່ (ຂໍ້ 3)*

**9** *ກ. ບໍ່ຮູ້ຈັກພະເຈົ້າ (ຂໍ້ 8)*
*ເປັນຂ້ອຍຂ້າຂອງສິ່ງຕ່າງໆ*

*ຂ. ໂປໂລປະກາດຂ່າວປະເສີດແກ່ເຂົາ (ຂໍ້ 13)*
*ໂປໂລເຈັບປ່ວຍທາງຮ່າງກາຍ (ຂໍ້ 13)*
*ເຖິງວ່າສຸຂະພາບເປັນທີ່ຈະທົດລອງໃຈເຂົາກໍຕາມ ເຂົາຕ້ອນຮັບດີ (ຂໍ້ 14)*
*ເຂົາມີຄວາມຍິນດີ (ຂໍ້ 15)*
*ຖ້າເປັນໄປໄດ້ ເຂົາພ້ອມໃຈຈະຄວັດໜ່ວຍຕາອອກໃຫ້ (ຂໍ້ 15)*

*ຄ. ຜູ້ມາສອນບໍ່ຈິງມາເອົາອົກເອົາໃຈເຂົາ (ຂໍ້ 17)*
*ທີ່ຈິງເຂົາຢາກກີດກັ້ນຊາວຄາລາເຕຍຈາກໂປໂລ (ຂໍ້ 17)*
*ເຂົາທຳໃຫ້ພີ່ນ້ອງໃນຄາລາເຕຍຖືວ່າໂປໂລເປັນສັດຕູ (ຂໍ້ 16)*
*ເຂົາໃຫ້ພີ່ນ້ອງກັບໄປຫາອຳນາດສິ່ງສັກສິດທຳມະດາ (ຂໍ້ 9)*
*ໃຫ້ເຂົາຖືວັນ ຖືເດືອນ ຖືລະດູ ແລະປີ (ຂໍ້ 10)*
*ໂປໂລຢ້ານວ່າການໜັກໜ່ວງທີ່ເຮັດ ຈະບໍ່ເປັນປະໂຫຍດ (ຂໍ້ 11)*
*ໂປໂລເຈັບປວດເພາະພວກເຂົາເໝືອນແມ່ເຈັບປວດເມື່ອເກີດລູກ (ຂໍ້ 19)*
*ໂປໂລຢາກຢູ່ກັບເຂົາ (ຂໍ້ 20)*

ຄຳຕອບ (ຕໍ່):

**10** *ເຂົາກຳລັງແລ່ນແຂ່ງດີຢູ່ແລ້ວ (ຂໍ້ 7)*
*ແຕ່ມີຜູ້ສອນບໍ່ຈິງມາຂັດຂວາງພວກເຂົາ (ຂໍ້ 7)*
*ຫວັງວ່າຈະເຂົ້າຫຼຸມແອກກັບໄປເປັນຂ້ອຍຂ້າອີກ (ຂໍ້ 1)*
*ຕ້ອງເຕືອນໃຈເຂົ້າເລື່ອງຄົນຕ່າງຊາດທີ່ຈະຮັບພິທີຕັດ (ຂໍ້ 1, 2, 12)*
*ໃນການກັບໄປຖືພະບັນຍັດ ຄືເຂົາຫລຸດຕົກຈາກພະຄຸນ (ຂໍ້ 4)*
*ການບໍ່ເຊື່ອແຜ່ອອກຢ່າງເຊື້ອແປ້ງ (ຂໍ້ 9)*
*ບາງຄົນປ່ອຍຕົວໄປຕາມທຳມະຊາດ (ຂໍ້ 13)*
*ເຂົາແຍກເປັນພັກເປັນພວກຈົນຢ້ານວ່າຈະພາກັນຈິບຫາຍໄປ (ຂໍ້ 15)*
*ເຖິງຢ່າງໃດກໍຕາມໂປໂລໄວ້ໃຈໃນພະເຈົ້າວ່າເຂົາຈະບໍ່ມີຄວາມຄິດຢ່າງອື່ນ (ຂໍ້ 10)*

**11** *ເຫັນຜູ້ສອນບໍ່ຈິງຂົ່ມໃຫ້ພີ່ນ້ອງຮັບພິທີຕັດ (ຂໍ້ 12)*
*ເຂົາເຮັດຢ່າງນັ້ນເພື່ອໃຫ້ໄດ້ໜ້າຕາມທຳມະດາມະນຸດ (ຂໍ້ 12)*
*ເຖິງແມ່ນຄົນຍິວກໍຕາມ ເຂົາກໍບໍ່ໄດ້ຖືຮັກສາພະບັນຍັດ (ຂໍ້ 13)*
*ເຂົາຢາກເອົາແຕ່ເລື່ອງນັ້ນໄປອວດອ້າງ (ຂໍ້ 13)*
*ໂປໂລເຕືອນເຂົາໄວ້ວ່າ ຈະເປັນການທີ່ສ້າງຂຶ້ນໃໝ່ໂດຍຄວາມຕາຍຂອງພະເຢຊູທີ່ໄມ້ກາງ ແຂນ ບໍ່ແມ່ນໂດຍພິທີຕັດ. (ຂໍ້ 14-15)*

**12** *ກ. ໂປໂລເປັນອັກຄະສາວົກແທ້*
*ຂ. ຄຳປະກາດຂອງໂຊໂລ*
*ຄ. ຊີວິດໃໝ່ໃນພະເຢຊູຄຼິດ*